ກະຊວງວິທະຍາສາດແລະເຕັກໂນໂລຊີ
ເລກທີ 1718
ລົງວັນທີ 26 AUG 2014
ເວລາ 1114
ສົ່ງເຖິງ.....

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ລັດຖະບານ

ເລກທີ 273 /ລບ

ນະຄອນຫລວງວຽງຈັນ, ວັນທີ 19.8.2014

# ດຳລັດ

## ວ່າດ້ວຍ ການອຸດໜູນການອອກລູກ ແລະ ປິ່ນປົວເດັກອາຍຸລຸ່ມຫ້າປີ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ແຫ່ງ ສປປລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍ ການປິ່ນປົວ ສະບັບເລກທີ 09/ສພຊ, ລົງວັນທີ 09 ພະຈິກ 2005;
- ອີງຕາມ ໜັງສືສະເໜີ ຂອງລັດຖະມົນຕີວ່າການກະຊວງ ສາທາລະນະສຸກ ສະບັບເລກທີ 955/ສທ, ລົງວັນທີ 30 ມິຖຸນາ 2014.

ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫລັກການ, ລະບຽບການ ແລະ ມາດຕະການກ່ຽວກັບ ການຄຸ້ມຄອງ, ການຈັດຕັ້ງປະຕິບັດນະໂຍບາຍໃຫ້ການອຸດໜູນການອອກລູກ ແລະ ປິ່ນປົວເດັກອາຍຸລຸ່ມຫ້າປີ ເພື່ອໃຫ້ແມ່ຍິງຖືພາໄປອອກລູກ ແລະ ເດັກອາຍຸລຸ່ມຫ້າປີ ເມື່ອເຈັບເປັນໄດ້ເຂົ້າຮັບການບໍລິການປິ່ນປົວຢູ່ສະຖານທີ່ບໍລິການສາທາລະນະສຸກຂອງລັດໃນທົ່ວປະເທດ ໂດຍສະເພາະເຂດຊົນນະບົດຫ່າງໄກສອກຫລີກ ແນໃສ່ ຫລຸດຜ່ອນອັດຕາການເສຍຊີວິດ ຂອງແມ່ ແລະ ເດັກ.

**ມາດຕາ 2 ການອຸດໜູນການອອກລູກ ແລະ ປິ່ນປົວເດັກອາຍຸລຸ່ມຫ້າປີ**

ການອຸດໜູນການອອກລູກ ແມ່ນການຈ່າຍເງິນຄ່າກວດທ້ອງກ່ອນອອກ, ຫລັງອອກ, ການປິ່ນປົວ, ການຜ່າຕັດ, ການກວດວິເຄາະ, ຄ່າເດີນທາງໄປ-ກັບ, ຄ່າສິ່ງຕໍ່, ຄ່າຫ້ອງນອນ ແລະ ຄ່າອາຫານ ໃຫ້ແກ່ແມ່ຍິງຖືພາມາອອກລູກ ແລະ ຜູ້ຕິດຕາມໜຶ່ງຄົນ ຢູ່ສະຖານບໍລິການສາທາລະນະສຸກ ຂອງລັດ.

ການອຸດໜູນປິ່ນປົວເດັກອາຍຸລຸ່ມຫ້າປີ ແມ່ນການຈ່າຍເງິນຄ່າກວດວິເຄາະ, ບົ່ງມະຕິພະຍາດ, ການປິ່ນປົວ, ການຜ່າຕັດ, ຄ່າຫ້ອງນອນ, ຄ່າສິ່ງຕໍ່, ຄ່າເດີນທາງໄປ-ກັບ ແລະ ຄ່າອາຫານ ໃຫ້ແກ່ຄົນເຈັບ ແລະ ຜູ້ຕິດຕາມໜຶ່ງຄົນ ຢູ່ສະຖານບໍລິການສາທາລະນະສຸກ ຂອງລັດ.

**ມາດຕາ 3 ການອະທິບາຍຄຳສັບ**

**ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ມີຄວາມໝາຍ ດັ່ງນີ້:**

1. **ແມ່ຍິງຖືພາ** ໝາຍເຖິງ ແມ່ຍິງທີ່ຕັ້ງຄັນ, ອອກລູກແບບທຳມະຊາດ ແລະ ແບບວິທະຍາສາດ;
2. **ເດັກອາຍຸລຸ່ມກວ່າຫ້າປີ** ໝາຍເຖິງ ເດັກທີ່ມີອາຍຸນັບແຕ່ວັນເກີດ ຫາ ຫ້າສິບເກົ້າເດືອນ;
3. **ສະຖານທີ່ບໍລິການສາທາລະນະສຸກຂອງລັດ** ໝາຍເຖິງ ໂຮງໝໍສູນກາງ, ໂຮງໝໍພາກ, ໂຮງໝໍແຂວງ, ໂຮງໝໍເມືອງ, ສຸກສາລາ ແລະ ຖົງຢາປະຈຳບ້ານ ທີ່ລັດໄດ້ສ້າງຕັ້ງຂຶ້ນ;
4. **ສະຖານທີ່ບໍລິການສາທາລະນະສຸກຂັ້ນຕົ້ນ** ໝາຍເຖິງ ຖົງຢາປະຈຳບ້ານ ແລະ ສຸກສາລາ;
5. **ສະຖານທີ່ບໍລິການຂັ້ນກາງ** ໝາຍເຖິງ ໂຮງໝໍເມືອງ, ເທດສະບານ;
6. **ສະຖານທີ່ບໍລິການຂັ້ນສູງ** ໝາຍເຖິງ ໂຮງໝໍແຂວງ, ນະຄອນ ແລະ ໂຮງໝໍພາກ;
7. **ສະຖານທີ່ບໍລິການຂັ້ນສູງສຸດ** ໝາຍເຖິງ ໂຮງໝໍສູນກາງ ແລະ ສູນປິ່ນປົວສະເພາະ;
8. **ແພດທີ່ຊຳນານງານໃນການຊ່ວຍອອກລູກ** ໝາຍເຖິງ ບຸກຄະລາກອນຂອງຂະແໜງສາທາລະນະສຸກ ທີ່ໄດ້ຮັບການຝຶກອົບຮົມກ່ຽວກັບວິຊາຊີບດ້ານການຊ່ວຍອອກລູກ ແລະ ມີປະສົບການໃນດ້ານດັ່ງກ່າວ ຊຶ່ງມີໃບຢັ້ງຢືນຈາກຂະແໜງສາທາລະນະສຸກ;
9. **ກອງທຶນປະກັນສຸຂະພາບແຫ່ງຊາດ** ໝາຍເຖິງ ການຈັດຕັ້ງລະບົບການເງິນ ດ້ານການປິ່ນປົວ ຊຶ່ງໄດ້ຮັບທຶນຈາກແຫລ່ງຕ່າງໆ ເຊັ່ນ ງົບປະມານຂອງລັດ, ການປະກອບສ່ວນຂອງສະມາຊິກ, ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ນຳໃຊ້ເຂົ້າໃນການຈ່າຍຄ່າປິ່ນປົວ;
10. **ສະມາຊິກປະກັນສຸຂະພາບ** ໝາຍເຖິງ ຜູ້ປະກັນຕົນ ແລະ ຜູ້ຂຶ້ນກັບຜູ້ປະກັນຕົນທີ່ຢູ່ໃນອົງການປະກັນສັງຄົມແຫ່ງລັດ (ອປລ), ອົງການປະກັນສັງຄົມພາກວິສາຫະກິດ (ອປສ), ກອງທຶນປະກັນສຸຂະພາບຊຸມຊົນ (ກປສຊ) ແລະ ກອງທຶນສຸຂະພາບ ສຳລັບຜູ້ທຸກຍາກ (ກສທ) ຊຶ່ງຈະລວມເປັນກອງທຶນສຸຂະພາບ ແຫ່ງຊາດ ໃນຕໍ່ໜ້າ.

**ມາດຕາ 4 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ນຳໃຊ້ສຳລັບແມ່ຍິງຖືພາ ແລະ ເດັກອາຍຸລຸ່ມຫ້າປີ ຊຶ່ງຖືສັນຊາດລາວ ແລະ ມີເອກະສານຢັ້ງຢືນວ່າແມ່ນຄົນລາວແທ້ ໂດຍມີ ບັດປະຈຳຕົວ, ສຳມະໂນຄົວ ແລະ ໃບຢັ້ງຢືນ ຈາກອົງການປົກຄອງ

ບ້ານທີ່ມີ ຫລື ບໍ່ມີລະບົບປະກັນສຸຂະພາບຄຸ້ມຄອງ ໄປອອກລູກ ແລະ ເຂົ້າຮັບບໍລິການປິ່ນປົວຢູ່ສະຖານທີ່ບໍລິການສາທາລະນະສຸກຂອງລັດໃນທົ່ວປະເທດ.

## ໝວດທີ 2
## ເງື່ອນໄຂ ແລະ ການໃຫ້ອຸດໜູນ

### ມາດຕາ 5 ເງື່ອນໄຂທີ່ລັດອຸດໜູນ

ແມ່ຍິງຖືພາໄປອອກລູກ ແລະ ເດັກອາຍຸລຸ່ມຫ້າປີ ຊຶ່ງຖືສັນຊາດລາວ ແມ່ນລັດຈະຮັບຜິດຊອບຈ່າຍເງິນອຸດໜູນທັງໝົດ ຕາມລາຍການທີ່ໄດ້ກຳນົດໄວ້ໃນມາດຕາ 6 ແລະ ມາດຕາ 7 ຂອງດຳລັດສະບັບນີ້. ສ່ວນຄ່າອາຫານ ແລະ ຄ່າເດີນທາງແມ່ນຈະຕອບສະໜອງໃຫ້ສະເພາະ ຜູ້ທຸກຍາກ ແລະ ຜູ້ຢູ່ຫ່າງໄກສອກຫລີກເທົ່ານັ້ນ.

### ມາດຕາ 6 ການອຸດໜູນການອອກລູກ

ຜູ້ອອກລູກຈະໄດ້ຮັບການອຸດໜູນ ດັ່ງນີ້:

- ໄລຍະຖືພາໄດ້ຮັບການກວດທ້ອງຢ່າງໜ້ອຍ ສີ່ຄັ້ງ ແລະ ກວດຫລັງອອກລູກ ຢ່າງໜ້ອຍສອງຄັ້ງ;
- ໄດ້ຮັບການຊ່ວຍອອກລູກທຸກໆ ກໍລະນີ ເຊັ່ນ ອອກລູກ ແລະ ມີອາການສົນຕ່າງໆ ທີ່ກ່ຽວກັບການຖືພາ ແລະ ການອອກລູກ;
- ຄ່າເອກະສານ, ຄ່າສິ້ນເປືອງວັດຖຸອຸປະກອນ;
- ຄ່າສີມືແຮງງານຂອງພະນັກງານສາທາລະນະສຸກ;
- ຄ່າຢາປົວພະຍາດ, ຄ່າສ່ອງລັງສີ, ຄ່າກວດວິເຄາະຕາມຫລັກວິຊາການ;
- ຄ່າຫ້ອງນອນທຳມະດາ;
- ຄ່າຜ່າຕັດເອົາລູກອອກ, ຜ່າຕັດລູກນອກພົກ ແລະ ອາການສົນຂອງການຫລຸລູກແບບທຳມະຊາດ;
- ກໍລະນີມີອາການສົນ ຕ້ອງໄດ້ນຳສົ່ງໄປຫາບ່ອນທີ່ມີເງື່ອນໄຂກວ່າ;
- ຄ່າອາຫານ, ຄ່າເດີນທາງໄປ-ກັບເຖິງສະຖານທີ່ບໍລິການ ລວມທັງຄ່ານຳສົ່ງຕໍ່ ຄົນເຈັບ ແລະ ຜູ້ຕິດຕາມໜຶ່ງຄົນ ທີ່ບໍ່ຢູ່ພາຍໃຕ້ຄວາມຄຸ້ມຄອງຂອງກອງທຶນປະກັນສຸຂະພາບໃດໆ.

### ມາດຕາ 7 ການອຸດໜູນສຳລັບການປິ່ນປົວເດັກອາຍຸລຸ່ມຫ້າປີ

ເດັກອາຍຸລຸ່ມກວ່າຫ້າປີຈະໄດ້ຮັບການອຸດໜູນ ດັ່ງນີ້:

- ຄ່າກວດພະຍາດ, ຄ່າປິ່ນປົວພະຍາດ;
- ຄ່າຢາປົວພະຍາດ, ຄ່າສ່ອງລັງສີ, ຄ່າກວດວິເຄາະຕາມຫລັກວິຊາການ;
- ຄ່າເອກະສານ, ຄ່າສິ້ນເປືອງວັດຖຸອຸປະກອນ;
- ຄ່າສີມືແຮງງານຂອງພະນັກງານສາທາລະນະສຸກ;
- ຄ່າຫ້ອງນອນທຳມະດາ;